ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ປະກອບສ່ວນຊຸກຍູ້ ວັນສ້າງຕັ້ງກອງທັບ ຄົບຮອບ 72 ປີ





ຕອນບ່າຍຂອງວັນທີ 18 ມັງກອນ 2021 ຜ່ານມານີ້, ຕາງໜ້າຄະນະພັກ, ຄະນະນຳ ແລະ ສາມອົງການຈັດຕັ້ງມະຫາຊົນຂອງ ທະນາຄານແຫ່ງ ສປປ ລາວ ເຊິ່ງນຳໂດຍ ທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ, ເຂົ້າຮ່ວມອວຍພອນເນື່ອງໃນວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 72 ປີ; ທ່ານ ພົນໂທ ທອງລອຍ ສິລິວົງ ກຳມະການສູນກາງພັກ, ຮອງລັດຖະມົນຕີກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການ ເມືອງກອງທັບ ຕ້ອນຮັບໃນວັນສຳຄັນດັ່ງກ່າວ.

ໃນການເຂົ້າອວຍພອນໃນຄັ້ງນີ້,ກໍ່ເພື່ອເປັນການຮັດແໜ້ນຄວາມສາມະຄີທີ່ເປັນມູນເຊື້ອອັນດີງາມລະຫວ່າງຂະແໜງທະນາຄານກັບກອງທັບປະຊາຊົນລາວ, ແລະທັງເປັນການສະແດງຄວາມຮູ້ບຸນ ຄຸນຕໍ່ກັບນາຍແລະພົນທະຫານຂອງກອງທັບປະຊາຊົນລາວ ທີ່ເຮັດໜ້າທີ່ປົກປັກຮັກສາປະເທດຊາດ ແລະ ພ້ອມດຽວກັນນີ້ທາງທະນາຄານແຫ່ງ ສປປ ລາວ ໄດ້ປະກອບສ່ວນຊຸກຍູ້ວັດຖຸປັດໃຈຈຳນວນ 72,000,000 ກີບ ເພື່ອເປັນການປະກອບ ສ່ວນເຂົ້າໃນການປັບປຸງກໍ່ສ້າງກອງທັບຕາມມະຕິຂອງອົງຄະນະພັກກະຊວງປ້ອງກັນປະເທດ.

ຂ່າວ-ພາບ: ທ ສົມພົດ ທຳມະວົງ